# ບົນເສັ້ນທາງແຫ່ງການກ້າວເດີນຂອງສະຫະພັນກຳມະບານທະນາຄານ ແຫ່ງ ສປປ ລາວ



**ໂດຍ : ຣັດສະໝີ ດວງສັດຈະ**

ໃນຂຸມປີແຫ່ງການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ່ V ຂອງສະຫະພັນກຳມະບານທະນາຄານ ແຫ່ງ ສປປ ລາວ ແມ່ນຢູ່ໃນທ່າມກາງສະພາບການສາກົນ ແລະ ພາກພື້ນຍັງຜັນແປໄປຢ່າງສັບສົນເປັນຕົ້ນມີການແຂ່ງຂັນກັນທາງດ້ານເສດຖະກິດ, ການຄ້າ, ການລົງທຶນ ແລະ ການພັດທະນາເຕັກໂນໂລຊີ ແລະ ມັນໄດ້ສົ່ງຜົນສະທ້ອນ ແລະ ມີສິ່ງທ້າທາຍພາໃຫ້ມີປະກົດການເກີດຂຶ້ນຫຼາຍບັນຫາໂດຍສະເພາະ ແມ່ນການຜັນຜວນຂອງອັດຕາແລກປ່ຽນຢູ່ໃນຕະຫຼາດສາກົນ, ບັນຫານ້ຳມັນ ແລະ ອື່ນໆ.

ແຕ່ດ້ວຍການຊີ້ນຳ-ນຳພາທີ່ສະຫຼາດສ່ອງໃສຂອງພັກ ແລະ ລັດຖະບານໂດຍສະເພາະພາຍໃຕ້ການຊີ້ນຳ, ຕິດຕາມຢ່າງໃກ້ສິດຂອງຄະນະພັກ, ຄະນະນຳທະນາຄານແຫ່ງ ສປປ ລາວ ກໍ່ຄືການປະກອບສ່ວນຂອງ ອົງການຈັດຕັ້ງສັງຄົມຕ່າງໆ ສະນັ້ນຈຶ່ງເຮັດໃຫ້ເກີດມີສະຖຽນລະພາບທາງດ້ານເງິນຕາຂອງ ສປປ ລາວ

ມີຄວາມໝັ້ນທ່ຽງ, ເງິນກີບມີສະຖຽນລະພາບ ແລະ ແຂງຄ່າ, ອັດຕາແລກປ່ຽນມີຄວາມສະຫງົບ, ສັງຄົມມີຄວາມເຊື່ອໝັ້ນຕໍ່ລະບົບທະນາຄານນັບມື້ນັບເພີ່ມຂຶ້ນເລື້ອຍໆ.

ສະຫະພັນກຳມະບານທະນາຄານແຫ່ງ ສປປ ລາວ(ທຫລ) ເປັນອົງການຈັດຕັ້ງມະຫາຊົນທີ່ຢູ່ພາຍໃຕ້ການຊີ້ນຳຂອງອົງຄະນະພັກທະນາຄານແຫ່ງ ສປປ ລາວ ໄດ້ມີການເຄື່ອນໄຫວຢ່າງຕັ້ງໜ້າປະກອບສ່ວນເຂົ້າໃນການຮັກສາສະຖຽນລະພາບເງິນຕາແຫ່ງຊາດ. ໃນຜ່ານມາສະຫະພັນກຳມະບານ ທຫລ ໄດ້ຍົກສູງວຽກງານສຶກສາອົບຮົມ ນຳພາການເມືອງແນວຄິດໂດຍໄດ້ຈັດຕັ້ງການເຊື່ອມຊຶມມະຕິຕ່າງໆ ຂອງພັກ-ລັດ, ມີການດຳເນີນຊີວິດຢ່າງເປັນປົກກະຕິ, ມີລະບອບສ່ອງແສງລາຍງານຢ່າງເປັນປະຈຳອັນໄດ້ເຮັດໃຫ້ແນວຄິດຂອງພະນັກງານ, ສະມາຊິກກຳມະບານມີຄວາມອຸ່ນອຽນທຸ່ນທ່ຽງ ແລະ ຫ້າວຫັນເຮັດໜ້າທີ່ດ້ວຍຜົນສຳເລັດອັນຈົບງາມ. ໃນດ້ານການເງິນ ແລະ ກອງທຶນຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ກໍ່ມີບັນຫາພົ້ນເດັ່ນໂດຍສະເພາະໜ່ວຍກຳມະບານຮາກຖານທະນາຄານການຄ້າຕ່າງປະເທດກໍ່ມີເງິນກອງທຶນ 1.000 ລ້ານກວ່າກີບ, ໜ່ວຍກຳມະບານຮາກຖານ ທະນາຄານສົ່ງເສີມກະສິກຳກໍ່ມີເງິນກອງທຶນ 700 ລ້ານກວ່າກີບ ພ້ອມດຽວກັນນັ້ນສະຫະພັນກຳມະບານ ທຫລ ກໍ່ໄດ້ປະກອບສ່ວນຊ່ວຍເຫຼືອສັງຄົມ, ກຳລັງປະກອບອາວຸດ ແລະ ການຈັດຕັ້ງຕ່າງໆ ເກືອບ 100 ລ້ານກີບ, ໃນນັ້ນກຳມະບານທະນາຄານ ການຄ້າຕ່າງປະເທດ ກໍ່ໄດ້ປະກອບສ່ວນປຸກສ້າງໂຮງຮຽນປະຖົມໜຶ່ງຫຼັງຊ່ວຍເຫຼືອເມືອງສັງທອງ ນະຄອນຫຼວງວຽງຈັນ.

ໃນດ້ານວິຊາສະເພາະສະມາຊິກກຳມະບານໄດ້ເປັນເຈົ້າການໃນການຈັດຕັ້ງປະຕິບັດໜ້າທີ່ການບໍລິການຢ່າງຕັ້ງໜ້າ, ຮັບປະກັນຄວາມວ່ອງໄວ, ທັນສະໄໝ ແລະ ອຳນວຍຄວາມສະດວກໃຫ້ແກ່ລູກຄ້າ, ນອກນີ້ກໍ່ໄດ້ປະກອບສ່ວນຄົ້ນຄວ້າປະຕິບັດນະໂຍບາຍເງິນຕາຢ່າງມີໄຫວພິບໂດຍໄດ້ຊຸກຍູ້ໃຫ້ມີການນຳໃຊ້ເຄື່ອງມືດ້ານນະໂຍບາຍເງິນຕາໃຫ້ມີຄວາມຫຼາກຫຼາຍຢ່າງທັນການ, ດັດປັບອັດຕາດອກເບ້ຍນະໂຍບາຍໃນແຕ່ລະໄລຍະເພື່ອໃຫ້ສອດຄ່ອງກັບສະພາບເສດຖະກິດພາຍໃນ ແລະ ສາກົນ, ຊຸກຍູ້ການກູ້ຢືມລະຫວ່າງທະນາຄານໃຫ້ເຄື່ອນໄຫວຢ່າງແຂງແຮງ, ປັບປຸງອັດຕາເງິນແຮຝາກບັງຄັບໃນລະດັບທີ່ເໝາະສົມ, ສ້າງເງື່ອນໄຂໃຫ້ຕະຫຼາດເປີດມີການເຄື່ອນໄຫວຢ່າງຕັ້ງໜ້າເຮັດໃຫ້ໄພເງິນເຟີ້ຫຼຸດລົງຢູ່ໃນລະດັບ 1 ຕົວເລກ, ຊຸກຍູ້ໃຫ້ຕະຫຼາດຊື້-ຂາຍເງິນຕາຕ່າງປະເທດລະຫວ່າງທະນາຄານໃຫ້ມີການເຄື່ອນໄຫວຢ່າງແຂງແຮງໂດຍເປີດກວ້າງໃຫ້ມີການຊື້-ຂາຍທີ່ຫຼາກຫຼາຍສະກຸນເງິນ, ສະພາບອັດຕາແລກປ່ຽນມີຄວາມໝັ້ນທ່ຽງ, ຄັງສຳຮອງເງິນຕາຕ່າງປະເທດຂອງລັດຖະບານເພີ່ມຂຶ້ນ ຊຶ່ງສາມາດກຸ້ມການນຳເຂົ້າຫຼາຍກວ່າ 5 ເດືອນ.

ພ້ອມດຽວກັນນີ້ກໍສາມາດປັບປຸງນິຕິກຳຕ່າງໆໄດ້ຈຳນວນໜຶ່ງ ແລະ ມີຫຼາຍດຳລັດກໍ່ໄດ້ຖືກນຳໃຊ້ໄດ້ຢ່າງມີໝາກຜົນ, ຊຸກຍູ້ການຂະຫຍາຍຮ້ານແລກປ່ຽນຂອງທະນາຄານທຸລະກິດ ແລະ ເອກະຊົນຢ່າງກວ້າງຂວາງ, ສົ່ງເສີມໃຫ້ບັນດາທະນາຄານທະນາຄານທຸລະກິດຂະຫຍາຍຕູ້ ATM, ນຳໃຊ້ບັດເອເລັກໂຕຼນິກເພື່ອຫຼຸດຜ່ອນການນຳໃຊ້ເງິນສົດ, ໄດ້ຄົ້ນຄວ້າ ແລະ ສະໜອງສິນເຊື່ອໃຫ້ແກ່ການກໍ່ສ້າງພື້ນຖານໂຄງລ່າງ ແລະ

ໂຄງການບູລິມະສິດຕ່າງໆຂອງລັດຖະບານເພື່ອແກ້ໄຂຄວາມທຸກຍາກຂອງປະຊາຊົນ. ນອກນີ້ກໍ່ໄດ້ກະກຽມເງື່ອນໄຂດ້ານຕ່າງໆ ໃນການສ້າງຕັ້ງຕະຫຼາດຫຼັກຊັບຢູ່ ສປປ ລາວ ແລະ ວຽກງານສຳຄັນອື່ນໆອີກ, ໃນປະຈຸບັນຄະນະສະຫະພັນກຳມະບານ ທຫລ ມີ 7 ສະຫາຍ, ມີ 9 ຮາກຖານປະກອບເປັນ 100 ໜ່ວຍ ແລະ ມີສະມາຊິກທັງໝົດ 1.312 ສະຫາຍ.

ຈາກໝາກຜົນແຫ່ງການເຄື່ອນໄຫວບົນເສັ້ນທາງ 5 ປີ ຜ່ານມາ ເຊິ່ງໄດ້ສ້າງໃຫ້ພະນັກງານ, ສະມາຊິກກຳມະບານມີຄວາມເຕີບໃຫຍ່ເຂັ້ມແຂງຢ່າງບໍ່ຢຸດຢັ້ງ, ສະຫະພັນກຳມະບານ ທຫລ ໄດ້ກາຍເປັນເສນາທິການທີ່ໝັ້ນໃຈໃຫ້ແກ່ຄະນະພັກ - ຄະນະນຳ ທຫລ, ມີຫຼາຍສະຫາຍໄດ້ກາຍເປັນພະນັກງານຫຼັກແຫຼ່ງນຳພາ-ບັນຊາໃນບັນດາກົມກອງ, ບັນດາທະນາຄານທຸລະກິດ, ຫຼາຍສະຫາຍໄດ້ຮັບການເລື່ອນຊັ້ນ - ເລື່ອນໜ້າທີ່, ມີຫຼາຍສະຫາຍໄດ້ຮັບການປະດັບຫຼຽນໄຊ, ໃບຍ້ອງຍໍປະເພດຕ່າງໆ, ພິເສດສະຫະພັນກຳມະບານ ທຫລ ໄດ້ຮັບໃບຢັ້ງຢືນຫຼຽນໄຊຜົນງານດີເດັ່ນປະເພດ 1 ໃນການປະຕິບັດເນື້ອໃນ 2 ດີ 5 ເປັນເຈົ້າໃນປີ 2008 - 2009 ຈາກສູນກາງສະຫະພັນກຳມະບານລາວ ຢ່າງສົມກຽດ.